ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 081 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 30 AUG 2024

# ແຈ້ງການ

ເຖິງ: ຜູ້ທີ່ສົນໃຈຕ້ອງການສະໝັກສອບເສັງລະດັບຊາດ ສຳລັບວິຊາຊີບທ່ານໝໍ ຄັ້ງທີ 4.

ເລື່ອງ: ຂັ້ນຕອນການສະໝັກສອບເສັງລະດັບຊາດສຳລັບທ່ານໝໍຄັ້ງທີ 4.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຈັດຕັ້ງການສອບເສັງລະດັບຊາດສຳລັບວິຊາຊີບທ່ານໝໍ ເລກທີ 078/ສວສ, ລົງວັນທີ 22 ສິງຫາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສອບເສັງລະດັບຊາດ ສຳລັບທ່ານໝໍ ເລກທີ 079/ສວສ, ລົງວັນທີ 22 ສິງຫາ 2024.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຈະ **ຈັດການສອບເສັງລະດັບຊາດ ສຳລັບທ່ານໝໍຄັ້ງທີ 4 ຂຶ້ນ ໃນວັນທີ 24 ຫາ 25 ຕຸລາ 2024 ທີ່ ວິທະຍາເຂດດົງໂດສີ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ**. ດັ່ງນັ້ນ, ຈຶ່ງຂໍແຈ້ງໃຫ້ຜູ້ຮຽນທີ່ຈົບທ່ານໝໍ ທັງພາຍໃນ ແລະ ຕ່າງປະເທດ ທີ່ຮຽນຈົບແຕ່ ປີ 2020 ເປັນຕົ້ນມາ ທີ່ບໍ່ທັນໄດ້ສອບເສັງ ແລະ ຮັບໃບປະກອບວິຊາຊີບທ່ານໝໍ ໃຫ້ສະໝັກສອບເສັງ ແລະ ປະຕິບັດຕາມຂັ້ນຕອນ ລາຍລະອຽດດັ່ງນີ້:

1. ສະໝັກສອບເສັງດ້ວຍການດາວໂຫຼດແບບຟອມຄຳຮ້ອງຜ່ານທາງອອນລາຍໄດ້ທີ່: https://hpc.gov.la/la/doctor/examination ຫຼື ພິວພັນເອົາແບບຟອມສະໝັກໄດ້ ທີ່ ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1 (ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ໃນຂອບເຂດກະຊວງສາທາລະນະສຸກຕຶກໃໝ່);
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທະບຽນທາງອອນລາຍຜ່ານ QR code ທີ່ມີຢູ່ທ້າຍແບບຟອມ (ຖ້າບໍ່ລົງທະບຽນອອນລາຍຈະບໍ່ມີລາຍຊື່ສອບເສັງ);
3. ສົ່ງແບບຟອມຄຳຮ້ອງສະໝັກສອບເສັງໄດ້ ທີ່ ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1 (ຕຶກສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ໃນຂອບເຂດກະຊວງສາທາລະນະສຸກຕຶກໃໝ່) **ແຕ່ວັນທີ 02 ກັນຍາ ຫາ 04 ຕຸລາ 2024;**
4. ໃຫ້ມາຮັບບັດ ເຂົ້າຫ້ອງສອບເສັງ ແຕ່ວັນທີ 07 ຫາ 11 ຕຸລາ 2024 ທີ່ ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຊັ້ນ 1;

5. ຄ່າລົງທະບຽນສະໝັກສອບເສັງ ແມ່ນ 350,000 ກີບ/ຄົນ ຊຶ່ງຈະຕ້ອງຈ່າຍຕອນ ທີ່ ສົ່ງຟອມຄໍາຮ້ອງສະໝັກສອບເສັງ;
6. ຜູ້ສອບເສັງຕ້ອງກຽມອຸປະກອນໃນການສອບເສັງ ເຊັ່ນ: ສໍດໍາ 2B, ຢາງລຶບ ແລະ ອຸປະກອນແຫຼມສໍ.

ເຊັນແທນປະທານ

ສຈ ດຣ ຈັນເພັງ ທໍາມະວົງ

<u>ຕິດຕໍ່ປະສານງານ ໂທ ແລະ ວອດແອັບ:</u>

| | |
|---|---|
| ນ. ວົງເດືອນ ສະໜວັນສັກ | 9662 4956 |
| ດຣ. ເລກ ສີດາວົງ | 5500 8875 |
| ທ. ບຸນປະສິດ ຄໍາກອງ | 5986 8071 |